# ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມ

**(Dementia Conservatorship)**

## Probate Code Section 2356.5

## ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມຄືຫຍັງ?

ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມຄືເມື່ອຜູ້ພິພາກສາແຕ່ງຕັ້ງໃຫ້ໃຜຜູ້ໜຶ່ງເປັນຜູ້ຕັດສິນໃຈວ່າຈະໃຫ້ບຸກຄົນທີ່ເປັນພະຍາດຈິດເສື່ອມຢູ່ອາໄສບ່ອນໃດ. ບຸກຄົນທີ່ຖືກແຕ່ງຕັ້ງໂດຍຜູ້ພິພາກສາເອີ້ນວ່າ ຜູ້ຄຸ້ມຄອງ.

## ພະຍາດຈິດເສື່ອມມີຄວາມໝາຍຄືແນວໃດ?

ສານ (Probate Court) ອ້າງຄວາມໝາຍຂອງການເປັນພະຍາດຈິດເສື່ອມໂດຍອີງໃສ່ຄູ່ມືການບົ່ງມະຕິແລະສະຖິຕິທີ່ກ່ຽວກັບພະຍາດຈິດເສື່ອມ (Diagnostic and Statistical Manual of Mental Disorders, DSM) ສະບັບຫລ້າສຸດ. ບົດທີສີ່ຂອງ DSM ລະບຸວ່າ ລັກສະນະສຳຄັນຂອງພະຍາດຈິດເສື່ອມຄືການບົກພ່ອງດ້ານຄວາມຊົງຈຳ ແລະມີການບົກພ່ອງຮ່ວມດ້ວຍອັນໃດໜຶ່ງຕໍ່ໄປນີ້: ຄວາມສາມາດໃຊ້ພາສາຢ່າງຕໍ່ເນື່ອງ (ການບົກພ່ອງດ້ານການໃຊ້ພາສາ), ພາວະເສັຍຮູ້ການປະຕິບັດ (ການບົກພ່ອງດ້ານການເຄື່ອນໄຫວ), ພາວະຂາດການຮັບຮູ້ (ບໍ່ສາມາດຈື່ເຄື່ອງຂອງໄດ້) ຫລື ຄວາມຫຍຸ້ງຍາກໃນການໃຊ້ວຽກ (ເຊັ່ນ ການສະຫລຸບຄວາມຄິດ). ພະຍາດຈິດເສື່ອມອາດກ່ຽວພັນກັບພະຍາດຄວາມຈຳເສື່ອມ.

(Alzheimer's), ພະຍາດພາກິນສັນ (Parkinson's), ພະຍາດຮັນທິງຕັນ (Huntington's disease) ຫລື HIV, ນອກຈາກອາການເຈັບເປັນອື່ນໆ.



## ຂ້າພະເຈົ້າມີສິດທີ່ຈະຢູ່ບ່ອນໃດ ຖ້າວ່າຖືກຈັດໃຫ້ຢູ່ພາຍໃຕ້ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມ?

- ທ່ານມີສິດທີ່ຈະໄດ້ຮັບການຊ່ວຍເຫລືອໃຫ້ຢູ່ໃນບ່ອນທີ່ເໝາະສົມກັບຄວາມຕ້ອງການຂອງທ່ານຫລາຍທີ່ສຸດ.
- ຜູ້ຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມມີສິດທີ່ຈະຈັດໃຫ້ທ່ານໄດ້ຢູ່ໃນ (1) ສະຖານທີ່ຢູ່ອາໄສທີ່ປອດພັຍສຳລັບຜູ້ສູງອາຍຸ ຫລື (2) ບ້ານພັກຄົນຊະລາທີ່ຊຳນານໃນການເບິ່ງແຍງຄົນເປັນພະຍາດຈິດເສື່ອມ.
- ທ່ານ**ຈະບໍ່**ຖືກຈັດໃຫ້ຢູ່ໃນສູນຟື້ນຟູສຸຂະພາບຈິດ (Mental Health Rehabilitation Center) ຫລືສະຖານປິ່ນປົວພະຍາດຈິດ (Institution for Mental Disease: IMD).

## ຂ້າພະເຈົ້າຈະຖືກຈັດໃຫ້ຢູ່ພາຍໃຕ້ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມເມື່ອໃດ?

ສານສາມາດແຕ່ງຕັ້ງໃຫ້ມີຜູ້ຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມໄດ້ເມື່ອສານຄົ້ນພົບຫລັກຖານທີ່ຈະແຈ້ງແລະໜ້າເຊື່ອຖືດັ່ງນີ້:

- ທ່ານຖືກບົ່ງມະຕິພະຍາດເປັນພະຍາດຈິດເສື່ອມ.
- ທ່ານຖືກພົບວ່າຂາດຄວາມສາມາດທີ່ຈະໃຫ້ຄຳຍິນຍອມກ່ຽວກັບການຈັດໃຫ້ຢູ່ໃນສະຖານທີ່ທີ່ແນະນຳໃຫ້.
- ທ່ານຖືກພົບວ່າມີອາການບົກພ່ອງທາງຈິດຢ່າງໜ້ອຍໜຶ່ງຢ່າງເຊິ່ງເຮັດໃຫ້ທ່ານບໍ່ສາມາດເຂົ້າໃຈໄດ້ຢ່າງຈະແຈ້ງແລະບໍ່ສາມາດຮັບຮູ້ຜົນກະທົບຕາມມາຈາກການກະທຳຂອງທ່ານ.
- ທ່ານຈຳເປັນຫລືວ່າຈະໄດ້ປະໂຫຍດກ່ຽວກັບບ່ອນຢູ່ອາໄສທີ່ຈັດໃຫ້ທ່ານ.
  - ສານພົບວ່າ ບ່ອນທີ່ຈັດໃຫ້ທ່ານຢູ່ອາໄສນັ້ນມີການຈຳກັດໜ້ອຍທີ່ສຸດ ແລະເໝາະສົມກັບຄວາມຕ້ອງການຂອງທ່ານ.

## ຂ້າພະເຈົ້າຈະເສັຽສິດທິຫຍັງແດ່ພາຍໃຕ້ການຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມ?

ຜູ້ຄຸ້ມຄອງກ່ຽວກັບພະຍາດຈິດເສື່ອມສາມາດອະນຸຍາດກ່ຽວກັບການໃຫ້ຢາປິ່ນປົວທີ່ເໝາະສົມໄດ້. ສານຈະຕ້ອງມີຫລັກຖານທີ່ຈະແຈ້ງແລະໜ້າເຊື່ອຖືດັ່ງຕໍ່ໄປນີ້:

- ຜູ້ຖືກຄຸ້ມຄອງເປັນພະຍາດຈິດເສື່ອມ.
- ຜູ້ຖືກຄຸ້ມຄອງຂາດຄວາມສາມາດໃນການໃຫ້ຄຳຍິນຍອມດ້ານການໃຊ້ຢາປິ່ນປົວ.
- ຜູ້ຖືກຄຸ້ມຄອງມີອາການບົກພ່ອງດ້ານຈິດຢ່າງໜ້ອຍໜຶ່ງຢ່າງເຊິ່ງເຮັດໃຫ້ບໍ່ສາມາດເຂົ້າໃຈຜົນຕາມມາຈາກການກະທຳຂອງຕົນເອງໄດ້ຢ່າງຈະແຈ້ງ.
- ຜູ້ຖືກຄຸ້ມຄອງຈະໄດ້ຮັບປະໂຫຍດຈາກການໃຊ້ຢາປິ່ນປົວຕາມທີ່ທ່ານໝໍ ຫລືທ່ານໝໍໂຣກຈິດແນະນຳ.